# ທຫລ.ຊຂ ສືບຕໍ່ຮັກສາສະຖຽນລະພາບທາງດ້ານເງິນຕາ ຢູ່ 3 ແຂວງ



ໃນທ້າຍເດືອນທັນວາ ຜ່ານມານີ້; ທ່ານ ດອນສະຖຽນ ບຸນມີອາໄພ ວ່າການຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ (ທຫລ.ຊຂ) ໄດ້ໃຫ້ຮູ້ວ່າ: ທຫລ.ຊຂ, ໄດ້ເອົາໃຈໃສ່ເຜີຍແຜ່ບັນດາກົດໝາຍ ແລະ ນິຕິກຳ ທີ່ກ່ຽວຂ້ອງກັບຂະແໜງການທະນາຄານຢ່າງຕໍ່ເນື່ອງ ໂດຍສະເພາະກົດໝາຍ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດໃຫ້ແກ່ບັນດາບ້ານອ້ອມຂ້າງໃນບັນດາເມືອງອ້ອມຂ້າງແຂວງ ແລະ ພະນັກງານ, ນັກສຶກສາທີ່ໂຮງຮຽນການເມືອງການປົກຄອງທັງ 3 ແຂວງພາກ ເໜືອ; ພ້ອມນັ້ນ, ຍັງຊຸກຍູ້ບັນດາຮ້ານຂາຍຄຳ ແລະ ຂາຍເຄື່ອງຍ່ອຍ ຕາມທ້ອງຕະຫຼາດ ເພື່ອປຸກລະດົມໃຫ້ຮ້ານຄ້າຕິດລາຄາສິນຄ້າ ແລະ ຊຳລະສິນຄ້າເປັນເງິນກີບ. ນອກນັ້ນ, ຍັງຕິດຕາມກະແສເງິນຕາຕ່າງປະເທດໄຫຼເຂົ້າ-ອອກຂອງບໍລິສັດ ທີ່ມີການລົງທຶນຈາກຕ່າງປະເທດ ແລະ ບໍລິສັດຮ່ວມທຶນ ທີ່ມີການນຳເຂົ້າ-ສົ່ງອອກ ເປັນບັນຊີອອກຊື່ບໍລິສັດຕ່າງໆ, ເກັບກຳການນຳເງິນສົດ ທີ່ເປັນເງິນຕາຕ່າງປະເທດເຂົ້າອອກຜ່ານບັນດາດ່ານ.

ທຫລ.ຊຂ ໄດ້ກວດກາຢ່າງເປັນປົກກະຕິ, ຕິດຕາມຖານະການເງິນຂອງບັນດາສາຂາ/ໜ່ວຍບໍລິການທະນາຄານທຸລະກິດ ແລະ ບັນດາສະຖາບັນການເງິນຕ່າງໆ; ສາເລັດບົດປະເມີນຄວາມສ່ຽງ ປະຈຳໄຕມາດນັບແຕ່ໄຕມາດ I-III/2022 ສຳເລັດກອງ

ປະຊຸມເຜີຍແຜ່ນິຕິກຳຈຳນວນໜຶ່ງ ທີ່ຕິດພັນກັບວຽກງານການຄຸ້ມຄອງທະນາຄານທຸລະກິດ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ທະນາຄານທຸລະກິດໃນ 03 ແຂວງພາກເໜືອ (ຊຽງຂວາງ, ຫົວພັນ ແລະ ໄຊສົມບູນ) ທີ່ຂຶ້ນກັບ ທຫລ.ຊຂ ໃຫ້ມີຄວາມໝັ້ນຄົງ.

ການຄຸ້ມຄອງມະຫາພາກທາງດ້ານເງິນຕາ ທີ່ໄດ້ດັດສົມຮ້ານແລກປ່ຽນເງິນຕາຕົວແທນຢູ່ 03 ແຂວງພາກເໜືອ ໂດຍຍົກເລີກການອອກໃບອະນຸຍາດ ບໍ່ໃຫ້ສືບຕໍ່ດຳເນີນທຸລະກິດແລກປ່ຽນເງິນຕາມີທັງໝົດ ຈຳນວນ 19 ຮ້ານ (ຢູ່ຊຽງຂວາງ 15 ຮ້ານ ແລະ ຫົວພັນ 04 ເນື່ອງຈາກຮ້ານແລກປ່ຽນເງິນຕາດັ່ງກ່າວ ເຄື່ອນໄຫວບໍ່ສອດຄ່ອງຕາມລະບຽບການເປັນຕົວແທນຂອງທະນາຄານທຸລະກິດ ແລະ ລະບຽບການທີ່ ທຫລ ວາງ; ໄດ້ປະຕິບັດນະໂຍບາຍຄຸ້ມຄອງອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ ໂດຍອີງຕາມອັດຕາແລກປ່ຽນອ້າງອີງ ກີບ/ໂດລາ ທີ່ ທຫລ ສຳນັກງານໃຫຍ່ກຳນົດໃນແຕ່ລະວັນ.

ສຳລັບການຊີ້ນຳ-ນຳພາທະນາຄານທຸລະກິດ ໃນການຈຳໜ່າຍພັນທະບັດ ທຫລ ຊຸກຍູ້ໃຫ້ບັນດາຂາສາ/ໜ່ວຍບໍລິການທະນາຄານທຸລະກິດ ເອົາໃຈໃສ່ປະຊາສຳພັນ, ແນະນຳໃຫ້ປະຊາຊົນເຂົ້າໃຈ ຕໍ່ກັບການລະດົມທຶນຂອງ ທຫລ ໃນຄັ້ງນີ້ໄປໃນທິດທາງດຽວກັນ; ເພື່ອໃຫ້ທຸກຊັ້ນຄົນໄດ້ມີໂອກາດລົງທຶນໃນປະເພດຫຼັກຊັບທີ່ໝັ້ນຄົງ ແລະ ປອດໄພທີ່ສຸດ ແລະ ໃຫ້ຜົນຕອບແທນທີ່ດີໃນອັດຕາດອກເບ້ຍ 20% ຕໍ່ປີ, ພ້ອມທັງເປັນການຈັດຕັ້ງປະຕິບັດນະໂຍບາຍເງິນຕາເພື່ອປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບເງິນຕາແຫ່ງຊາດ ກໍ່ຄືວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມທຸກຍາກທາງດ້ານເສດຖະກິດ-ການເງິນ. ໃນທ້າຍເດືອນ ພະຈິກ ທັງ 03 ແຂວງພາກເໜືອສາມາດຈຳໜ່າຍພັນທະບັດໄດ້ທັງໝົດ 408,93 ຕື້ກີບ ກວມເອົາ 8,89% ຂອງຍອດຈຳໜ່າຍທົ່ວປະເທດ.

ທິດທາງແຜນການໃນຕໍ່ໜ້າ ຈະສືບຕໍ່ຮັກສາສະເຖຍລະພາບທາງດ້ານເງິນຕາໃນທ້ອງຖິ່ນທີ່ຮັບຜິດຊອບ ໂດຍການຕິດຕາມຄຸ້ມຄອງ, ກວດກາ ການແລກປ່ຽນເງິນຕາ ທີ່ບໍ່ໄດ້ຮັບອະນຸຍາດ ແລະ ການບໍລິການໂອນເງິນທາງເອເລັກໂທຣນິກ ທີ່ບໍ່ໄດ້ຮັບອະນຸຍາດ ໂດຍສົມທົບກັບຕຳຫຼວດເສດຖະກິດແຂວງ ແລະ ສືບຕໍ່ສ້າງຄວາມເຂົ້າໃຈໃຫ້ແກ່ສັງຄົມ ແລະ ເຜີຍແຜ່ບັນດານິຕິກຳຕ່າງໆທີ່ຕິດພັນກັບການຮັກສາສະເຖຍລະພາບທາງດ້ານເງິນຕາຕ່າງປະເທດໃຫ້ແກ່ບັນດາຕົວເມືອງຕ່າງໆພາຍໃນ 03 ແຂວງ; ສືບ ຕໍ່ຕິດຕາມຖານະການເງິນ, ປະເມີນຕາມຄວາມສ່ຽງ ແລະ ຂຶ້ນແຜນການລົງກວດກາປະຈຳປີ 2023 ຢ່າງເປັນປົກກະຕິ, ພ້ອມດຽວກັນນັ້ນກໍ່ຕິດຕາມ ແລະ ຊຸກຍູ້ການເກັບກູ້ໜີ້ສິນຂອງບັນດາສາຂາ/ໜ່ວຍທະນາຄານທຸລະກິດ ແລະ ບັນດາສະຖາບັນການເງິນ.

**# ຂ່າວ: ຮັດສະໝີ ດວງສັດຈະ**

*ຢູ່ເມືອງລາວໃຊ້ເງິນກີບລາວ*